## ການຮຽນ-ການສອນພັດທະນາໄປພ້ອມພຽງຮຽງໜ້າກັນ





ນາງ ອານິດາ ນັກຮຽນລາວທີ່ຮຽນຂະແໜງວິຊາການຄຸ້ມຄອງການປະຕິບັດງານການຄົມມະນາຄົມມີລາງ ວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ ກ່າວວ່າ: “ຂ້າພະເຈົ້າຂີ່ຂະບວນລົດໄຟໂດຍສານຕາມທາງລົດໄຟ ລາວ-ຈີນ ຄັ້ງທຳອິດ, ຮູ້ສຶກຕື່ນເຕັ້ນທີ່ສຸດ, ຂ້າພະເຈົ້າຄິດວ່າ, ເທື່ອທຳອິດຈະວິນຫົວ, ແຕ່ທີ່ຈິງແລ້ວ, ລົດໄຟແລ່ນງຽບສະຫງົບດີ, ຂີ່ໄດ້ຢ່າງສະບາຍ.” ນາງກ່າວຕື່ມວ່າ: ຂ້າພະເຈົ້າມາຈາກນະຄອນຫຼວງວຽງຈັນ, ພາຍຫຼັງຮຽນຈົບແລ້ວ, ຢາກເປັນພະນັກງານປະຈຳຢູ່ຂະບວນລົດໄຟ ຕາມທາງລົດໄຟ ລາວ-ຈີນ.

ທ້າວ ກໍ ແມ່ນນັກສຶກສາລາວໃນວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງເຊັ່ນດຽວກັນ, ລາວຮຽນວິຊາເຄື່ອງບັນຊາ ແລະ ຮັກສາຫົວຈັກທາງລົດໄຟ. ລາວກ່າວວ່າ: “ຂ້າພະເຈົ້າມີຄວາມຮູ້ສຶກດີໃຈທີ່ສຸດ ໃນເວລາຮຽນຂັບຫົວຈັກລົດໄຟຈຳລອງເປັນຄັ້ງທຳອິດ. ຫ້ອງຂັບ ຄືກັນກັບຂອງແທ້ອີ່ຫຼີ.” ລາວເວົ້າວ່າ: ພາຍຫຼັງຮຽນຈົບແລ້ວ, ຢາກເປັນຜູ້ຂັບຫົວຈັກລົດໄຟ.

ເດືອນສິງຫາ 2023, ຄູສອນທາງລົດໄຟ 40 ທ່ານຂອງລາວ ຊຸດທຳອິດ ໄດ້ສຳເລັດການຮຽນຢູ່ວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງ ແລະ ກັບຄືນປະເທດລາວ, ຄູສອນຄົນຈີນໃນວິທະຍາໄລເຕັກນິກວິຊາຊີບທາງລົດໄຟຄຸນໝິງທີ່ໄປຊ່ວຍເຫຼືອລາວກໍໄດ້ເດີນທາງໄປນະຄອນຫຼວງວຽງຈັນພ້ອມກັນ.

ທ່ານ ເຝິງທາວ (Feng Tao) ຫົວໜ້າຄະນະຜູ້ຊ່ຽວຊານທີ່ໄປຊ່ວຍເຫຼືອວິທະຍາໄລເຕັກນິກ-ວິຊາຊີບການທາງລົດໄຟລາວຊຸດທີ 3 ກ່າວວ່າ: “ຂ້າພະເຈົ້າມາຈາກນະຄອນຄຸນໝິງ, ປັດຈຸບັນ, ໄດ້ເປັນຄູສອນຢູ່ນະຄອນຫຼວງວຽງຈັນ. ຊາວຄຸນໝິງທຸກຄົນອາດຈະພາກພູມໃຈ ແລະ ດີໃຈຕໍ່ໂຄງການທາງລົດໄຟບໍ່ຫຼາຍກໍໜ້ອຍ. ອາດເວົ້າໄດ້ວ່າ, ຖ້າບໍ່ມີທາງລົດໄຟ, ກໍຈະບໍ່ມີການພັດທະນາຂອງນະຄອນຄຸນໝິງ.” ທ່ານກ່າວຕື່ມວ່າ: ພວກເຮົາຫວັງວ່າ, ຈະສາມາດສ້າງລະບົບອົບຮົມຊັບພະຍາກອນມະນຸດທາງລົດໄຟແບບຍືນຍົງໃຫ້ແກ່ປະເທດລາວພາຍໃນເວລາ 5 ປີ ເພື່ອຊ່ວຍພາລະກິດທາງລົດໄຟຂອງປະເທດລາວໄດ້ບັນລຸການກ້າວກະໂດດຂັ້ນຈາກ 0 ຫາ 1.

ການພົວພັນລະຫວ່າງສອງໂຮງຮຽນດັ່ງກ່າວ, ໄດ້ສ່ອງແສງໃຫ້ເຫັນເຖິງມິດຕະພາບລະຫວ່າງຕົວເມືອງແຮກສ່ຽວ, ທາງລົດໄຟ ລາວ-ຈີນ ໄດ້ເຊື່ອມຕໍ່ນະຄອນຄຸນໝິງ ແລະ ນະຄອນຫຼວງວຽງຈັນ, ປະຊາຊົນສອງຕົວເມືອງດັ່ງກ່າວ ມີຄວາມສະໜິດສະໜົມນັບມື້ນັບຫຼາຍຂຶ້ນ ຍ້ອນການໄປມາຫາສູ່ກັນທີ່ນັບມື້ນັບແໜ້ນແຟ້ນ.



# ການພົວພັນຮ່ວມມື ລະຫວ່າງ ນະຄອນຫຼວງວຽງຈັນ ແລະ ນະຄອນຄຸນໝິງ ນັບມື້ນັບໃກ້ຊິດກັນ

ປີ 2011, ນະຄອນຄຸນໝິງ ສປ ຈີນ ແລະ ນະຄອນຫຼວງວຽງຈັນ ສປປ ລາວ ໄດ້ສ້າງເປັນເມືອງແຮກສ່ຽວຢ່າງເປັນທາງການ. ວັນທີ 3 ທັນວາ 2021, ທາງລົດໄຟ ລາວ-ຈີນ ໄດ້ເປີດນຳໃຊ້ຢ່າງເປັນທາງການ, ການເດີນທາງຈາກນະຄອນຫຼວງວຽງຈັນ ຫາ ນະຄອນຄຸນໝິງ ມີຄວາມສະດວກສະບາຍຂຶ້ນຫຼາຍ ເມື່ອທຽບໃສ່ແຕ່ກ່ອນ. ເດືອນພະຈິກ 2024, ນະຄອນຫຼວງວຽງຈັນ ແລະ ນະຄອນຄຸນໝິງ ໄດ້ເຊັນສັນຍາສະຫະພັນຕົວເມືອງລຽບຕາມທາງລົດໄຟ ລາວ-ຈີນ. ພາຍໃຕ້ການສະໜັບສະໜູນຂອງທາງລົດໄຟ ລາວ-ຈີນ, ນະຄອນຫຼວງວຽງຈັນ ແລະ ນະຄອນຄຸນໝິງ ມີເລື່ອງລາວທີ່ດີເກີດຂຶ້ນແນວໃດແດ່? ໃຫ້ພວກເຮົາມາຕິດຕາມນຳກັນ!

## ຂະແໜງການທ່ອງທ່ຽວຂ້າມຊາດ ລາວ-ຈີນ ພັດທະນາຢ່າງວ່ອງໄວຍ້ອນທາງລົດໄຟ





ນາງ ວັນນະພອນ ຄຳພິລົມ ມາຈາກນະຄອນຫຼວງວຽງຈັນ, ເປັນຜູ້ສ້າງຕັ້ງບໍລິສັດທ່ອງທ່ຽວສາກົນຮ່ວມທຶນ ຈີນ-ລາວ. ນາງ ວັນນະພອນ ຄຳພິລົມ ກ່າວວ່າ: “ຂ້າພະເຈົ້າມັກຂີ່ຂະບວນລົດໄຟ ກັບຄືນນະຄອນຫຼວງວຽງຈັນຈາກນະຄອນຄຸນໝິງ. ຂ້າພະເຈົ້າເຫັນວ່າ, ມີນັກທ່ອງທ່ຽວຈີນໄປທ່ຽວປະເທດລາວເປັນຈຳນວນຫຼວງຫຼາຍ ແລະ ກໍມີປະຊາຊົນລາວມາທ່ຽວຈີນຫຼາຍເຊັ່ນດຽວກັນ. ນາງກ່າວຕື່ມວ່າ: ຂ້າພະເຈົ້າຊ່ວຍນັກທ່ອງທ່ຽວເຫຼົ່ານີ້ໄປຄົ້ນພົບແຫຼ່ງທ່ອງທ່ຽວທີ່ດີ ແລະ ອາຫານທີ່ແຊບຊ້ອຍ ໂດຍຜ່ານການໂພສວີດີໂອຢູ່ຕາມສື່ສັງຄົມອອນລາຍ.

ເດືອນມີນາ 2023, ນາງ ວັນນະພອນ ຄຳພິລົມ ໄດ້ສ້າງຕັ້ງບໍລິສັດທ່ອງທ່ຽວສາກົນແຫ່ງໜຶ່ງຢູ່ນະຄອນຄຸນໝິງ. ທ່ານກ່າວວ່າ: “ຂ້າພະເຈົ້າຢາກນຳພາປະຊາຊົນລາວ ມາທ່ຽວຈີນນັບມື້ນັບຫຼາຍຂຶ້ນ ແລະ ຢາກນຳພາປະຊາຊົນຈີນ ໄປທ່ຽວລາວນັບມື້ນັບຫຼາຍຂຶ້ນເຊັ່ນກັນ.”

ທາງລົດໄຟລາວ-ຈີນ ໄດ້ຊຸກຍູ້ການພັດທະນາຂອງຂະແໜງການທ່ອງທ່ຽວຂອງສອງປະເທດ ລາວ-ຈີນ ຢ່າງຫຼວງຫຼາຍ. ນາງ ລົງສຽວລີ (Long Xiaoli) ທີ່ດຳລົງຊີວິດ ຢູ່ນະຄອນຄຸນໝິງກໍມີຄວາມຮູ້ສຶກທີ່ຄ້າຍຄືກັນ. 15 ປີກ່ອນ, ນາງ ລົງສຽວລີ ແລະ ໝູ່ຂອງລາວ ເຊິ່ງເປັນຄົນລາວໄດ້ສ້າງຕັ້ງບໍລິສັດທ່ອງທ່ຽວມັງກອນລາວຈຳກັດ ຕົ້ນຕໍຈະດຳເນີນທຸລະກິດກ່ຽວກັບການບໍລິການທ່ອງທ່ຽວຂ້າມຊາດ ລາວ-ຈີນ. ຄຽງຄູ່ກັບການເປີດນຳໃຊ້ທາງລົດໄຟ ລາວ-ຈີນ, ທຸລະກິດຂອງບໍລິສັດທ່ອງທ່ຽວມັງກອນລາວຈຳກັດ ໄດ້ເພີ່ມຂຶ້ນຢ່າງວ່ອງໄວ, ທາງບໍລິສັດໄດ້ສ້າງຕັ້ງບໍລິສັດສາຂາ ແລະ ສຳນັກງານຜູ້ຕາງໜ້າຫຼາຍແຫ່ງ.

ນາງ ລົງສຽວລີ ກ່າວວ່າ: “ປັດຈຸບັນ, ນັກທ່ອງທ່ຽວຈີນທີ່ໄປທ່ຽວລາວ ສ່ວນຫຼາຍຈະເລືອກຂີ່ຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟ ລາວ-ຈີນ. ປີຜ່ານມານີ້, ພວກເຮົາໄດ້ຈັດວາງເສັ້ນທາງທ່ອງທ່ຽວ “ພັນຄົນຂີ່ລົດໄຟໄປທ່ຽວລາວ ທ່າມກາງບັນຍາກາດກິ່ນຫອມດອກໄມ້ຕະຫຼອດທາງ” ເຊິ່ງໄດ້ຮັບໝາກຜົນເໜືອຄວາມຄາດໝາຍຫຼາຍ.” ນາງກ່າວຕື່ມວ່າ: ທາງບໍລິສັດພວມວາງແຜນໂຄງການດີເດັ່ນທີ່ “ນັກທ່ອງທ່ຽວລາວມາທ່ຽວຈີນ.”

## ການເຊື່ອມໂຍງເຂົ້າກັນດ້ານວັດທະນະທຳອາຫານການກິນ





ເວົ້າສຳລັບ ທ້າວ ວຽງໄຊ ພຸດທະວົງ ຊາວໜຸ່ມລາວແລ້ວ, ທາງລົດໄຟ ລາວ-ຈີນ ເປັນ “ເສັ້ນທາງບັນລຸຄວາມຝັນ” ຂອງລາວ, ລາວໄດ້ເດີນທາງຈາກນະຄອນຫຼວງວຽງຈັນ ມາເຖິງນະຄອນຄຸນໝິງ, ການເປີດນຳໃຊ້ທາງລົດໄຟສາຍນີ້ ເຮັດໃຫ້ການດຳລົງຊີວິດຂອງລາວແຕກຕ່າງ. ເມື່ອຫຼາຍປີກ່ອນ, ລາວມາຮຽນຢູ່ຈີນ, ຍ້ອນລາວມັກວັດທະນະທຳຈີນຫຼາຍ, ລາວໄດ້ຕົກລົງພັດທະນາຢູ່ຈີນ. ຢູ່ນະຄອນຄຸນໝິງ, ລາວບໍ່ພຽງແຕ່ໄດ້ສ້າງພາລະກິດຂອງຕົນເທົ່ານັ້ນ, ຫາກຍັງໄດ້ຮູ້ຈັກກັບຄູ່ຮັກຂອງຕົນ.

ທ້າວ ວຽງໄຊ ພຸດທະວົງ ເວົ້າດ້ວຍຄວາມດີໃຈວ່າ: “ຂ້າພະເຈົ້າເອງມັກເຂົ້າປຸ້ນໝໍ້ນ້ອຍ ແລະ ເຂົ້າປຸ້ນຂ້າມຂົວຂອງນະຄອນຄຸນໝິງທີ່ສຸດ, ຮູ້ສຶກເປັນຕາແຊບອີ່ຫຼີ.” ເຂົ້າປຸ້ນຂ້າມຂົວທີ່ ທ້າວ ວຽງໄຊ ພຸດທະວົງ ເວົ້ານັ້ນແມ່ນມາຈາກເມືອງເມິງຈື (Mengzi) ຂອງແຂວງຢຸນນານ, ປັດຈຸບັນ, ໄດ້ກາຍເປັນອາຫານ ທີ່ມີເອກະລັກພິເສດຂອງນະຄອນຄຸນໝິງແລ້ວ. ເວົ້າສຳລັບນັກທ່ອງທ່ຽວຈີນທີ່ຂີ່ຂະບວນລົດໄຟ ໄປທ່ຽວປະເທດລາວແລ້ວ, ກິນເຂົ້າປຸ້ນຂ້າມຂົວສົດໆຮ້ອນໆຢູ່ນະຄອນຄຸນໝິງໃນຕອນເຊົ້າແລ້ວໄປກິນເບຍລາວຢູ່ນະຄອນຫຼວງວຽງຈັນໃນຕອນຄ່ຳ, ນີ້ບໍ່ພຽງແຕ່ຈະໄດ້ຊີມລົດຊາດທີ່ຕ່າງກັນ, ຍັງສາມາດສຳຜັດກັບວັດທະນະທຳທີ່ຕ່າງກັນຂອງສອງປະເທດລາວ-ຈີນ.

ຄຽງຄູ່ກັບຄວາມສາມາດດ້ານການຂົນສົ່ງຕາມທາງລົດໄຟ ລາວ-ຈີນ ໄດ້ຍົກສູງຂຶ້ນຢ່າງຕໍ່ເນື່ອງ, ເບຍລາວກໍໄດ້ຖືກຂົນສົ່ງເຂົ້າຈີນ ແລະ ກາຍເປັນເບຍທີ່ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້ານະຄອນຄຸນໝິງ ແລະ ຕົວເມືອງຕ່າງໆຂອງຈີນ. ທ່ານ ຟານຈຸນເຟີງ (Fan Junfeng) ເຈົ້າຂອງຮ້ານອາຫານສະບາຍດີ·ຄົວລາວ ຂອງນະຄອນຄຸນໝິງກ່າວວ່າ: ລູກຄ້າເກືອບໝົດທຸກຄົນກໍຢາກຊີມເບຍລາວ.

ປັດຈຸບັນ, ຖ້າທ່ານຍ່າງຕາມຖະໜົນຫົນທາງນະຄອນຄຸນໝິງ, ເບຍລາວ, ກາເຟລາວ ແລະ ຊີ້ນດາດລາວ ລ້ວນແຕ່ໄດ້ກາຍເປັນພາກສ່ວນໜຶ່ງຂອງອາຫານການກິນທ້ອງຖິ່ນແລ້ວ. ສິ່ງເຫຼົ່ານີ້ ໄດ້ຢັ້ງຢືນແກ່ສາຍພົວພັນລະຫວ່າງສອງເມືອງແຮກສ່ຽວ ຄືນະຄອນຄຸນໝິງ ແລະ ນະຄອນຫຼວງວຽງຈັນ ນັບມື້ນັບແໜ້ນແຟ້ນຍິ່ງຂຶ້ນ.

ທ່ານ ຖົງໄຫລິນ (Teng Hailin) ຕົວແທນຈຳໜ່າຍເບຍລາວຂອງຈີນ ກ່າວວ່າ: ເບຍລາວມີຖານະສຳຄັນໃນວັດທະນະທຳລາວ. ປັດຈຸບັນ, ຂະບວນລົດໄຟໄດ້ອອກເດີນທາງແຕ່ເຊົ້າຈາກນະຄອນຫຼວງວຽງຈັນທຸກມື້, ຕອນແລງກໍເດີນທາງເຖິງນະຄອນຄຸນໝິງ; ໃນຂະນະດຽວກັນ, ຂະບວນລົດໄຟອອກເດີນທາງຈາກນະຄອນຄຸນໝິງທຸກມື້, ຕອນແລງກໍເດີນທາງເຖິງນະຄອນຫຼວງວຽງຈັນເຊັ່ນດຽວກັນ. ນອກຈາກສອງຕົວເມືອງນີ້ແລ້ວ, ຊື່ສຽງ ແລະ ອິດທິພົນຂອງທາງລົດໄຟຍັງສາມາດເຜີຍແຜ່ໄປເຖິງບ່ອນໄກກວ່ານັ້ນ, ສາມາດເຜີຍແຜ່ໄປເຖິງພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ແຜ່ນດິນໃຫຍ່ຈີນ, ຈີນເຖິງປະເທດຕ່າງໆ ຂອງເອີຣົບ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com